ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

.....................................

ກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 0760/ພບ

ນະຄອນຫຼວງວຽງຈັນ, ວັນທີ 28 MAY 2015

## ລະບຽບການ
## ວ່າດ້ວຍການຄຸ້ມຄອງ ໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ

- ອີງຕາມກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 02/ສພຊ, ລົງວັນທີ 20/12/2011; ມາດຕາ 83 ຂໍ້ ຂ (8,10,12 ແລະ 14)
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 372/ນຍ, ລົງວັນທີ 21/10/2011.

**ເພື່ອເຮັດໃຫ້ການສ້າງຕັ້ງ, ການດຳເນີນ ແລະ ການຄຸ້ມຄອງ ໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ເປັນປະໂຫຍດ ຕໍ່ປະເທດຊາດ, ຕໍ່ຜູ້ລົງທຶນ ແລະ ຫຼີກລ້ຽງຜົນກະທົບຕໍ່ສິ່ງແວດລ້ອມ**

**ລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ກຳນົດລະບຽບການ:**

## ໝວດ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ລະບຽບການ ວ່າດ້ວຍ ການຄຸ້ມຄອງ ໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດສະບັບນີ້ ວາງອອກເພື່ອກຳນົດຫຼັກການ, ສິດໜ້າທີ່, ຄວາມຮັບຜິດຊອບ, ຂັ້ນຕອນການອະນຸຍາດສ້າງຕັ້ງ, ດຳເນີນໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ວາງມາດຕະການຄຸ້ມຄອງການດຳເນີນການ ເສີມຄຸນຄ່າ ແລະ ແຍກແຮ່ທາດ, ແນໃສ່ເຮັດໃຫ້ການຄຸ້ມຄອງອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດຢ່າງລວມສູນ, ຖືກຕ້ອງຕາມກົດໝາຍ ແລະ ນຳໃຊ້ຊັບພະຍາກອນແຮ່ທາດ ມີຜົນປະໂຫຍດຕໍ່ເສດຖະກິດຂອງຊາດ, ຈຳກັດຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ຮັບປະກັນໃຫ້ຍືນຍົງ.

**ມາດຕາ 2 ນິຍາມຄໍາສັບ**

1. ໂຮງງານອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ແມ່ນໝາຍເຖິງອາຄານ, ສະຖານທີ່ ແລະ ອຸປະກອນກົນຈັກຕ່າງໆ ທີ່ຮັບໃຊ້ການຂົບ, ການບົດ, ການລ້າງ, ການແຍກ, ການເຜົາ, ການຫຼໍ່ຫຼອມເພື່ອແຍກໂລຫະຕ່າງໆ, ການກັ່ນຕອງ, ການປຸ່ງນຮູບ, ການປຸ່ງນແປງ ສ່ວນປະກອບທາງດ້ານເຄມີໃນໂລຫະ ຫຼື ອະໂລຫະ ແລະ ການເຈຍລະໄນ.
2. ການເສີມຄຸນຄ່າ ແລະ ແຍກແຮ່ທາດ ແມ່ນມີຄວາມໝາຍດຽວກັນກັບ ການປຸງແຕ່ງແຮ່ທາດທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 02/ສພຊ, ລົງວັນທີ 20/12/2011 ໝາຍເຖິງວິທີການຍົກສູງຄຸນນະພາບຂອງແຮ່ທາດ ດ້ວຍວິທີການ ເຊັ່ນ: Mineral processing Hydrometallurgy, Pyrometallurgy, Electrometallurgy ແລະ Biomining ເພື່ອໃຫ້ແຮ່ທາດມີຄຸນນະພາບສູງຂຶ້ນ ຫຼື ແຮ່ທາດບໍລິສຸດ ຫຼື ໂລຫະບໍລິສຸດ ຫຼື ອະໂລຫະບໍລິສຸດ ເພື່ອກາຍເປັນສິນຄ້າຕາມຄວາມຕ້ອງການຂອງຕະຫຼາດແຮ່ທາດຫຼືໂລຫະທາດຫຼືອະໂລຫະທາດ.
3. ໂຮງງານອຸດສາຫະກໍາແປຮູບ ຫຼື ໂຮງງານອຸດສາຫະກໍາປຸງແຕ່ງຮູບປະພັນ ໝາຍເຖິງໂຮງງານປຸງແຕ່ງ ທີ່ນໍາເອົາຜະລິດຕະພັນແຮ່ທາດສໍາເລັດຮູບ ມາປຸງແຕ່ງໃຫ້ກາຍເປັນຜະລິດຕະພັນສຸດທ້າຍ ເຊັ່ນ: ໂຮງງານຣີດເຫຼັກເສັ້ນ, ໂຮງງານຜະລິດສາຍໄຟຟ້າ, ໂຮງງານຜະລິດລົດ, ໂຮງງານປະສົມຄອນຄລີດ, ໂຮງງານຜະລິດເສົາໄຟຟ້າ, ໂຮງງານຜະລິດເຄື່ອງເອເລັກໂຕຣນິກ, ໂຮງງານເຮັດເຄື່ອງປະດັບ ແລະ ອື່ນໆ.
4. ແຮ່ດິບ ຫຼື ດິນແຮ່ ແມ່ນແຮ່ທາດທີ່ໄດ້ຂຸດຄົ້ນອອກມາຈາກທໍາມະຊາດ ຊຶ່ງຍັງບໍ່ທັນໄດ້ຜ່ານຂັ້ນຕອນ ການເສີມຄຸນຄ່າ ແລະ ແຍກແຮ່ທາດຂັ້ນຕອນໃດໜຶ່ງ.
5. ແກ້ວດິບ ໝາຍເຖິງແກ້ວປະເສີດທີ່ຜ່ານການລ້າງ, ຄັດເລືອກ ແລະ ເຜົາ ແຕ່ບໍ່ທັນໄດ້ຜ່ານການເຈຍລະໄນ.
6. ຜະລິດຕະພັນແຮ່ທາດເຄິ່ງສໍາເລັດຮູບ ແມ່ນແຮ່ທາດທີ່ໄດ້ຜ່ານຂັ້ນຕອນ ການເສີມຄຸນຄ່າ ແລະ ແຍກແຮ່ທາດ ຂັ້ນຕອນໃດໜຶ່ງເປັນຕົ້ນ: ແຮ່ເຂັ້ມຂຸ້ນ, ແທ່ງໂລຫະຄໍາປະສົມ, ແກ້ວປະເສີດທີ່ຜ່ານການເຈຍລະໄນຂັ້ນຕົ້ນ ແຕ່ຍັງບໍ່ສາມາດນໍາໃຊ້ເຂົ້າໃນອຸດສາຫະກໍາປຸງແຕ່ງເປັນຮູບປະພັນໄດ້.
7. ຜະລິດຕະພັນແຮ່ທາດສໍາເລັດຮູບ ແມ່ນແຮ່ທາດທີ່ໄດ້ຜ່ານຂັ້ນຕອນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຂັ້ນຕອນສຸດທ້າຍແລ້ວ ເປັນຕົ້ນ: ໂລຫະປະສົມອານລອຍ, ແທ່ງຄໍາ 99,99%, ແທ່ງເງິນ 99,99%, ແທ່ງອາລູມີນຽມ, ແຜ່ນ (ແທ່ງ) ທອງ, ແຜ່ນ (ແທ່ງ) ເຫຼັກ; ສໍາລັບແຮ່ອະໂລຫະ (ແຮ່-ຫີນອຸດສາຫະກໍາ ແລະ ແກ້ວປະເສີດ) ເຊັ່ນ: ແປ້ງຫີນກາວ, ຫີນປູນທີ່ຜ່ານການຂົບ ຫຼື ເຜົາ, ເກືອກິນ, ເກືອອຸດສາຫະກໍາ, ແກ້ວປະເສີດທີ່ຜ່ານການເຈຍລະໄນຂັ້ນສຸດທ້າຍ ແລະ ສາມາດນໍາໃຊ້ເຂົ້າໃນອຸດສາຫະກໍາປຸງແຕ່ງເປັນຮູບປະພັນໄດ້.

8. ໂຮງງານເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ມີເຂດສຳປະທານເປັນຂອງຕົນເອງ ແມ່ນກິດຈະການທີ່ຕິດພັນກັບ ສັນຍາສຳປະທານຂຸດຄົ້ນບໍ່ແຮ່.
9. ໂຮງງານເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ມີເຂດສຳປະທານເປັນຂອງຕົນເອງ ແມ່ນກິດຈະການທີ່ບໍ່ຕິດພັນກັບສັນຍາສຳປະທານຂຸດຄົ້ນບໍ່ແຮ່.

**ມາດຕາ 3. ຂອບເຂດການນຳໃຊ້**

ລະບຽບການສະບັບນີ້ນຳໃຊ້ກັບບຸກຄົນ, ນິຕິບຸກຄົນ ທັງພາຍໃນແລະຕ່າງປະເທດທີ່ດຳເນີນທຸລະກິດ ກ່ຽວກັບການເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ກາຍເປັນຜະລິດຕະພັນແຮ່ທາດເຄິ່ງສຳເລັດ ຫຼື ຜະລິດຕະພັນແຮ່ທາດສຳເລັດຮູບ ຢູ່ ສປປ ລາວ ຍົກເວັ້ນກິດຈະການກ່ຽວກັບເສີມຄຸນຄ່າ ແລະ ແຍກແຮ່ທາດປະເພດແຮ່ທາດພະລັງງານ (Energy Minerals) ເປັນຕົ້ນແມ່ນນ້ຳມັນດິບ, ອາຍແກສທຳມະຊາດ, ແຮ່ທາດກຳມັນຕະພາບລັງສີ ແລະ ນ້ຳຮ້ອນຈາກໃຕ້ດິນ (Geothermal) ຈະມີລະບຽບສະເພາະຕ່າງຫາກ.

## ໝວດທີ II
## ໝວດ, ປະເພດ ແລະ ຂະໜາດຂອງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ

**ມາດຕາ 4. ໝວດຂອງໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ**

ໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ໄດ້ຈັດແບ່ງອອກເປັນສອງໝວດຄື:

1. ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ.
2. ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ.

**ມາດຕາ 5. ປະເພດໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.**

ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດແບ່ງອອກເປັນ 3 ປະເພດພື້ນຖານຄື:

1. ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ແຮ່ທາດໂລຫະ (Metallic- Minerals)
2. ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ແຮ່ທາດອະໂລຫະ (Non Metallic Minerals)
3. ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ແຮ່ທາດປະເພດພະລັງງານ (Energy Minerals)

**ມາດຕາ 6. ຂະໜາດຂອງໂຮງງານປຸງອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ**

ຂະໜາດຂອງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດແມ່ນກຳນົດຕາມ ມູນຄ່າການລົງທຶນ ເຂົ້າໃນໂຮງງານອຸດສາຫະກຳ ເສີມຄຸນຄ່າແລະແຍກແຮ່ທາດ ໄດ້ກຳນົດດັ່ງນີ້:

1. ຂະໜາດນ້ອຍ: ມີມູນຄ່າການລົງທຶນ ເຂົ້າໃນໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ນ້ອຍກວ່າ 2 ລ້ານໂດລາສະຫະລັດ.
2. ຂະໜາດກາງ: ມີມູນຄ່າການລົງທຶນ ເຂົ້າໃນໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ແຕ່ 2 ລ້ານໂດລາສາຫະລັດ ຫາ 20 ລ້ານໂດລາສະຫະລັດ.
3. ຂະໜາດໃຫຍ່: ມີມູນຄ່າການລົງທຶນ ເຂົ້າໃນໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຫຼາຍກວ່າ 20 ລ້ານໂດລາສະຫະລັດ.

## ໝວດທີ III
## ການອະນຸຍາດສ້າງຕັ້ງໂຮງງານ ແລະ ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ

**ມາດຕາ 7. ການປະກອບເອກະສານສະເໜີຂໍໃບອະນຸຍາດສ້າງຕັ້ງໂຮງງານ ແລະ ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ.**

ບຸກຄົນ ຫຼື ນິຕິບຸກຄົນມີ ຈຸດປະສົງ ສ້າງຕັ້ງໂຮງງານ ແລະ ດຳເນີນການ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຕ້ອງປະກອບເອກະສານສະເໜີຕໍ່ ກະຊວງພະລັງງານ ແລະ ບໍ່ແຮ່ ມີດັ່ງນີ້:

ກ. ຜູ້ລົງທຶນທີ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ຕ້ອງມີເອກະສານ ດັ່ງນີ້:

**1. ໄລຍະດຳເນີນການກໍ່ສ້າງໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.**

1.1. ໃບສະເໜີ;

1.2. ສັນຍາວ່າດ້ວຍ ການຂຸດຄົ້ນ-ປຸງແຕ່ງແຮ່ທາດ (ຫຼື ເສີມຄຸນຄ່າ ແລະ ແຍກແຮ່ທາດ) ກັບລັດຖະບານ;

1.3. ໃບທະບຽນສຳປະທານ;

1.4. ແຜນການກໍ່ສ້າງບໍ່ແຮ່ ແລະ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

1.5. ແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ;

1.6. ແບບກໍ່ສ້າງອາຄານໂຮງງານທີ່ຖືກຮັບຮອງ/ຢັ້ງຢືນ ແລະ ໃບອະນຸຍາດກໍ່ສ້າງອາຄານ ຕາມລະບຽບການຂອງຂະແໜງໂຍທາທິການ ແລະຂົນສົ່ງ;

1.7. ໃບຢັ້ງຢືນດ້ານສິ່ງແວດລ້ອມ ຈາກຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

1.8. ໃບອະນຸຍາດ ຫຼື ຂໍ້ຕົກລົງນຳໃຊ້ທີ່ດິນເພື່ອດຳເນີນການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ ຂອງແຂວງ ຫຼື ນະຄອນຫຼວງ.

**2. ໄລຍະດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ:**

2.1. ໃບສະເໜີຂໍດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ.

2.2. ບົດລາຍງານຜົນການກໍ່ສ້າງ ແລະ ຕິດຕັ້ງອຸປະກອນກົນຈັກ.

2.3. ໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງປຸກສ້າງ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

2.4 ບົດບັນທຶກການລົງກວດກາຂອງກົມບໍ່ແຮ່.

**ຂ. ຜູ້ລົງທຶນທີ່ບໍ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:**

**1. ໄລຍະສະເໜີສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກໂຄງການເສີມຄຸນຄ່າ ແລະ ແຍກແຮ່ທາດ:**

1.1. ໃບສະເໜີຂໍສ້າງຕັ້ງໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ເຖິງກົມບໍ່ແຮ່ໂດຍຜ່ານລະບົບປະຕູດຽວ (ຕາມແບບຟອມຂໍລົງທຶນຂອງກະຊວງແຜນການ ແລະ ການລົງທຶນ).

1.2. ໃບສະແດງຖານະການເງິນ.

1.3. ໃບສະແດງປະສົບປະການໃນການດຳເນີນກິດຈະການ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຂອງບຸກຄົນ ຫຼື ນິຕິບຸກຄົນທີ່ສະເໜີ.

1.4. ບົດສະເໜີໂຄງການ.

**2. ໄລຍະດຳເນີນການກໍ່ສ້າງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ:**

2.1. ໃບສະເໜີຂໍດຳເນີນການກໍ່ສ້າງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

2.2.ໃບທະບຽນສຳປະທານ.

2.3. ແຜນການກໍ່ສ້າງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

2.4. ແຜນການປຸງແຕ່ງແຮ່ທາດທີ່ຖືກຮັບຮອງຈາກກະຊວງພະລັງງານ ແລະ ບໍ່ແຮ່.

2.5. ແບບກໍ່ສ້າງອາຄານໂຮງງານທີ່ຖືກຮັບຮອງ/ຢັ້ງຢືນ ແລະ ໃບອະນຸຍາດກໍ່ສ້າງອາຄານ ຕາມລະບຽບການຂອງຂະແໜງໂຍທາທິການ ແລະ ຂົນສົ່ງ.

2.6. ໃບຢັ້ງຢືນດ້ານສິ່ງແວດລ້ອມ ຈາກຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

2.7. ໃບອະນຸຍາດ ຫຼື ຂໍ້ຕົກລົງນຳໃຊ້ທີ່ດິນເພື່ອດຳເນີນການກໍ່ສ້າງ ຈາກ ຂະແໜງການທີ່ກ່ຽວຂ້ອງ ຂອງ ແຂວງ ຫຼື ນະຄອນຫຼວງ.

2.8. ບົດວິພາກເສດຖະກິດ-ເຕັກນິກທີ່ຖືກຮັບຮອງ ຈາກ ກະຊວງພະລັງງານ ແລະ ບໍ່ແຮ່.

2.9. ສັນຍາຊື້-ຂາຍແຮ່ທາດ ຫຼື ຂໍ້ຕົກລົງເບື້ອງຕົ້ນ ກ່ຽວກັບການຊື້-ຂາຍແຮ່ທາດ.

**3. ໄລຍະດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ.**

3.1. ໃບສະເໜີຂໍດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ.

3.2. ບົດລາຍງານຜົນການກໍ່ສ້າງ ແລະ ຕິດຕັ້ງອຸປະກອນກົນຈັກ.

3.3. ໃບຢັ້ງຢືນຄວາມຖືກຕ້ອງ ຂອງສິ່ງປຸກສ້າງ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

3.4. ບົດບັນທຶກການລົງກວດກາການກໍ່ສ້າງ ໂຮງງານອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດຂອງກົມບໍ່ແຮ່.

3.5. ສັນຍາຊື້-ຂາຍແຮ່ທາດ.

**ມາດຕາ 8. ການພິຈາລະນາຄໍາຮ້ອງ.**

ເມື່ອຜູ້ລົງທຶນປະກອບເອກະສານຄົບຖ້ວນ ຕາມທີ່ລະບຸໄວ້ໃນມາດຕາ 7 ຂອງລະບຽບການສະບັບນີ້ແລ້ວ, ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກອະນຸຍາດ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ກໍ່ສ້າງ ຫຼື ດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດພາຍໃນ 30 ວັນລັດຖະການ.

**ມາດຕາ 9. ອາຍຸ ຂອງໃບອະນຸຍາດ.**

1. ໃບອະນຸຍາດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງ ໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ມີເຂດສໍາປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ມີອາຍຸ 1 ປີ ແລະ ສາມາດຕໍ່ໄດ້ 1 ປີ ຫຼື ຕາມການຕົກລົງ ຂອງລັດຖະບານ.

   ການອອກໃບອະນຸຍາດແຕ່ລະຄັ້ງ ຈະບໍ່ເກີນ 1 ປີ ແລະ ຈະອອກໃຫ້ຈົນຄົບຕາມກໍານົດເວລາ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນສັນຍາ ຫຼື ການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ.

2. ໃບອະນຸຍາດກໍ່ສ້າງໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ມີອາຍຸຕາມ ບົດວິພາກເສດຖະກິດ-ເຕັກນິກຫຼື ແຜນການກໍ່ສ້າງໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຫຼື ສັນຍາ ແລະ ສາມາດຕໍ່ໄດ້ ຊຶ່ງລັດຖະບານເປັນຜູ້ຕົກລົງຕາມແຕ່ລະກໍລະນີ ໂດຍອີງຕາມຂະໜາດຂອງ ໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

   ການອອກໃບອະນຸຍາດແຕ່ລະຄັ້ງ ຈະບໍ່ເກີນ 2 ປີ ແລະ ຈະອອກໃຫ້ຈົນຄົບຕາມກໍານົດເວລາ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນສັນຍາ ຫຼື ການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ.

3. ໃບອະນຸຍາດດໍາເນີນການອຸດສາຫະກໍາເສີມຄຸນຄ່າແລະແຍກແຮ່ທາດມີອາຍຸແມ່ນບໍ່ໃຫ້ເກີນ 20 ປີ ຫຼື ຕາມອາຍຸທີ່ກໍານົດໄວ້ໃນສັນຍາ ທີ່ໄດ້ເຊັນກັບລັດຖະບານ ແຫ່ງ ສປປ ລາວ ແລະ ສາມາດຕໍ່ໄດ້ ຊຶ່ງລັດຖະບານເປັນຜູ້ຕົກລົງຕາມແຕ່ລະກໍລະນີ ໂດຍອີງຕາມຂະໜາດຂອງໂຮງງານ ອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ແຫຼ່ງສະໜອງວັດຖຸດິບທີ່ເປັນແຮ່ທາດ ເພື່ອປ້ອນໂຮງງານ ອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

   ການອອກໃບອະນຸຍາດແຕ່ລະຄັ້ງ ຈະບໍ່ເກີນ 5 ປີ ແລະ ຈະອອກໃຫ້ຈົນຄົບຕາມຕາມກໍານົດເວລາ ຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນສັນຍາ ຫຼື ການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ.

**ມາດຕາ 10 ເງື່ອນໄຂ ຂອງ ການຂໍຕໍ່ໃບອະນຸຍາດ.**

ຜູ້ດຳເນີນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ກໍ່ສ້າງໂຮງງານ ຫຼື ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດ ຕ້ອງໄດ້ຍື່ນໃບສະເໜີຕໍ່ຂະແໜງພະລັງງານ ແລະ ບໍ່ແຮ່ ພາຍໃນ 30 ວັນ ກ່ອນໃບອະນຸຍາດໝົດອາຍຸ ແລະ ຕ້ອງປະຕິບັດຕາມເງື່ອນໄຂຕົ້ນຕໍດັ່ງນີ້:

**1. ໃນໄລຍະສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ:**

1.1. ສົ່ງບົດລາຍງານຄວາມຄືບໜ້າ ຂອງການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ແຜນການສືບຕໍ່.

1.2. ຕ້ອງໄດ້ດຳເນີນວຽກງານຕາມແຜນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ທີ່ຂະແໜງການທີ່ກ່ຽວຂ້ອງຮັບຮອງເອົາ ໃຫ້ສຳເລັດບໍ່ຕ່ຳກວ່າ 60%.

1.3. ລາຍງານເປັນປົກກະຕິຕາມທີ່ກຳນົດໄວ້ໃນ ຂໍ້ຕົກລົງ ຂອງກະຊວງພະລັງ ແລະ ບໍ່ແຮ່.

1.4. ປະຕິບັດ ພັນທະທາງດ້ານການເງິນ ຕໍ່ລັດຖະບານ ຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການ.

1.5. ໄດ້ຮັບການສະໜັບສະໜູນຈາກ ອົງການປົກຄອງທ້ອງຖິ່ນ.

**2. ໃນໄລຍະດຳເນີນການກໍ່ສ້າງໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ:**

2.1. ສົ່ງບົດລາຍງານຄວາມຄືບໜ້າຜົນການດຳເນີນການກໍ່ສ້າງໂຮງງານອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ແຜນການສືບຕໍ່.

2.2. ຕ້ອງໄດ້ດຳເນີນວຽກງານຕາມແຜນການກໍ່ສ້າງ ທີ່ຂະແໜງການທີ່ກ່ຽວຂ້ອງຮັບຮອງເອົາໃຫ້ສຳເລັດ ບໍ່ຕ່ຳກວ່າ 60%.

2.3. ການກໍ່ສ້າງອາຄານ ແລະ ຕິດຕັ້ງອຸປະກອນກົນຈັກ ຖືກຕ້ອງຕາມການອອກແບບ ທີ່ຖືກຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ.

2.4. ລາຍງານເປັນປົກກະຕິ ຕາມທີ່ກຳນົດໄວ້ໃນສັນຍາ ຫຼື ຂໍ້ຕົກລົງ ຂອງກະຊວງພະລັງງານ ແລະ ບໍ່ແຮ່.

2.5. ປະຕິບັດຕາມລະບຽບຄວາມປອດໄພແຮງງານ, ສຸຂະອະນາໄມ, ສິ່ງແວດລ້ອມ-ສັງຄົມ, ການປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານ ແລະ ອື່ນໆ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

2.6. ໄດ້ຮັບການສະໜັບສະໜູນຈາກອົງການປົກຄອງທ້ອງຖິ່ນ.

2.7. ມີບົດລາຍງານ ແລະ ບົດບັນທຶກການລົງກວດກາ ຂອງ ຄະນະວິຊາການ ກົມບໍ່ແຮ່ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**3. ໃນໄລຍະດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ:**

3.1. ສົ່ງບົດລາຍງານຜົນການ ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຂອງຊຸມປີຜ່ານມາ ແລະ ແຜນການສືບຕໍ່.

3.2. ດຳເນີນວຽກງານຕາມແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຫຼື ບົດວິພາກເສດ

ຖະກິດ-ເຕັກນິກທີ່ໄດ້ຖືກຮັບຮອງຈາກຂະແໜງພະລັງງານ ແລະ ບໍ່ແຮ່ຢ່າງເປັນປົກກະຕິ.

3.3. ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

3.4. ລາຍງານເປັນປົກກະຕິ ຕາມທີ່ກຳນົດໄວ້ໃນສັນຍາ, ຂໍ້ຕົກລົງຂອງກະຊວງພະລັງງານ ແລະ ບໍ່ແຮ່.

3.5. ປະຕິບັດຕາມລະບຽບຄວາມປອດໄພແຮງງານ, ສຸຂະອະນາໄມ, ການປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານ ແລະ ອື່ນໆ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

3.6. ມີໜັງສືສະໜັບສະໜູນຈາກອົງການປົກຄອງທ້ອງຖິ່ນ.

3.7. ມີບົດລາຍງານ ແລະ ບົດບັນທຶກການລົງກວດກາ ຂອງ ຄະນະວິຊາການ ກົມບໍ່ແຮ່ ໂດຍສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ.

ເມື່ອຜູ້ລົງທຶນໄດ້ປະກອບເອກະສານຕົ້ນຕໍຄົບຖ້ວນ ຕາມທີ່ລະບຸໄວ້ໃນມາດຕາ 10 ຂອງລະບຽບການສະບັບນີ້. ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກອະນຸຍາດໃຫ້ສືບຕໍ່ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຫຼື ກໍ່ສ້າງ ຫຼື ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ພາຍໃນ 30 ວັນລັດຖະການ.

**ມາດຕາ 11. ການຂະຫຍາຍໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ**

ຜູ້ລົງທຶນ ມີຈຸດປະສົງຂໍຂະຫຍາຍ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຕ້ອງປະກອບເອກະສານ ແລະ ຍື່ນໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາ ດັ່ງນີ້:

1. ແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ ພາກຂະຫຍາຍ, ບົດວິພາກ ເສດຖະກິດ-ເຕັກນິກ ແລະ ແຜນການກໍ່ສ້າງເພີ່ມເຕີມ.
2. ບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ພາກຂະຫຍາຍ ແລະ ແຜນຜັງອາຄານໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ພາກຂະຫຍາຍ ສະບັບທີ່ໄດ້ຖືກຮັບຮອງ ຫຼື ຢັ້ງຢືນ ຈາກຂະແໜງການທີ່ກ່ຽວຂ້ອງ.

ເມື່ອຜູ້ລົງທຶນໄດ້ປະກອບເອກະສານຄົບຖ້ວນ ຕາມທີ່ລະບຸໄວ້ໃນມາດຕາ 11 ຂອງລະບຽບການສະບັບນີ້, ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກອະນຸຍາດ ກ່ຽວກັບການຂະຫຍາຍໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດໃຫ້ຜູ້ລົງທຶນ ພາຍໃນ 30 ວັນລັດຖະການ.

ສຳລັບການຂະຫຍາຍໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດທີ່ບໍ່ມີເຂດສຳປະທານຂຸດຄົ້ນ ເປັນຂອງຕົນເອງ ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຂອງແຮ່ທາດ, ສັນຍາຊື້-ຂາຍແຮ່ທາດເພີ່ມເຕີມ.

**ມາດຕາ 12. ການຍົກຍ້າຍໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດມີຈຸດປະສົງຍົກຍ້າຍໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໄປສະຖານທີ່ອື່ນ. ໃບອະນຸຍາດກໍ່ສ້າງ ຫຼື ໃບອະນຸຍາດດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຢູ່ເຂດເກົ່າຈະຖືກລົບລ້າງ ແລະ ຕ້ອງດຳເນີນການຂໍໃໝ່ຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນມາດຕາ 7 ຂອງລະບຽບສະບັບນີ້.

**ມາດຕາ 13. ການໂຈະ ຫຼື ຍົກເລີກກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.**

1. **ການໂຈະ**

ແມ່ນການຢຸດຕິການດຳເນີນກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດຊົ່ວຄາວ, ເຊິ່ງມີກຳນົດບໍ່ເກີນ 1 ປີ ໂດຍແມ່ນອົງການກ່ຽວຂ້ອງທີ່ມີສິດອຳນາດເປັນຜູ້ສັ່ງໂຈະ ຫຼື ຜູ້ລົງທຶນສະເໜີໂຈະດ້ວຍຄວາມສະໝັກໃຈ ຍ້ອນມີບັນຫາທາງດ້ານເຕັກນິກ, ຄວາມປອດໄພແຮງງານສຸຂະພາບ, ສິ່ງແວດລ້ອມ-ສັງຄົມ, ເສດຖະກິດ, ການປະຕິບັດພັນທະຕໍ່ລັດຖະບານ ແລະ ໄພທຳມະຊາດ ເຊິ່ງບັນຫາດັ່ງກ່າວມີຜົນກະທົບບໍ່ຮ້າຍແຮງ ແລະ ສາມາດແກ້ໄຂໄດ້.

2. **ການຍົກເລີກສັນຍາ ຫຼື ໃບອະນຸຍາດດຳເນີນກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດ.**

ການຍົກເລີກສັນຍາ ຫຼື ໃບອະນຸຍາດກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດແມ່ນການຢຸດຕິການດຳເນີນກິດຈະການ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດແບບຖາວອນ ໂດຍແມ່ນ ອົງການກ່ຽວຂ້ອງ ທີ່ມີສິດອຳນາດເປັນຜູ້ສັ່ງຍົກເລີກສັນຍາ ຫຼື ຜູ້ລົງທຶນສະເໜີໂຈະດ້ວຍຄວາມສະໝັກໃຈ ຍ້ອນບັນຫາທາງດ້ານ: ການປະຕິບັດສັນຍາ, ເຕັກນິກ, ຄວາມປອດໄພແຮງງານ-ສຸຂະພາບ, ສິ່ງແວດລ້ອມ-ສັງຄົມ, ເສດຖະກິດ ແລະ ໄພທຳມະຊາດ ເຊິ່ງບັນຫາດັ່ງກ່າວມີຜົນກະທົບຮ້າຍແຮງ ແລະ ບໍ່ສາມາດແກ້ໄຂໄດ້.

**ມາດຕາ 14. ການປະກອບເອກະສານສະເໜີຂໍໂຈະ ຫຼື ຢຸດເຊົາກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດໂດຍຜູ້ລົງທຶນເອງ:**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດທີ່ມີຈຸດປະສົງສະເໜີຂໍໂຈະ ຫຼື ຢຸດເຊົາກິດຈະການຂອງຕົນ ຕ້ອງໄດ້ປະກອບເອກະສານສະເໜີຕໍ່ຂະແໜງພະລັງງານ ແລະ ບໍ່ແຮ່ ດັ່ງນີ້:

ກ. ການສະເໜີຂໍໂຈະ

- ໃບສະເໜີຂໍໂຈະ ພ້ອມດ້ວຍເຫດຜົນ ແລະ ແຜນການສືບຕໍ່.
- ເອກະສານອື່ນໆ ຕາມການຮ້ອງຂໍຂອງຂະແໜງການທີ່ກ່ຽວຂ້ອງ.

ຂ. ການສະເໜີຂໍຢຸດເຊົາ

- ໃບສະເໜີຂໍຢຸດເຊົາ ພ້ອມດ້ວຍເຫດຜົນ.

- ບົດລາຍງານສະພາບການເສີມຄຸນຄ່າ ແລະ ແຍກແຮ່ທາດ.
- ໃບຢັ້ງຢືນຈາກອຳນາດການປົກຄອງທ້ອງຖິ່ນຂອງເຂດໂຄງການ.
- ບົດລາຍງານການປະຕິບັດພັນທະຕ່າງໆ ຕໍ່ລັດຖະບານ ແລະ ທ້ອງຖິ່ນ.
- ເອກະສານອື່ນໆ ຕາມການຮ້ອງຂໍ ຂອງ ຂະແໜງການທີ່ກ່ຽວຂ້ອງ.

ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາ ແລະ ແຈ້ງຕອບ ຕໍ່ການສະເໜີຂໍໂຈະ ຫຼື ຢຸດເຊົາພາຍໃນ 15 ວັນທາງລັດຖະການ.

**ມາດຕາ 15. ການໂອນສິດ, ການໃຫ້ເຊົ່າ, ການຊື້ ຫຼື ຂາຍ ກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.**

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ມີຄວາມຕ້ອງການໂອນສິດ, ໃຫ້ເຊົ່າ, ຂາຍກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ຜູ້ອື່ນເຈົ້າຂອງເດີມຕ້ອງຍື່ນຄຳຮ້ອງ ພ້ອມເອກະສານ ທີ່ກ່ຽວຂ້ອງຕໍ່ກະຊວງແຜນການ ແລະ ການລົງ ເພື່ອພິຈາລະນາບົນພື້ນຖານສັນຍາ ຂອງໂຄງການ ແລະ ກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ IV
## ກຳມະວິທີການເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ຜົນຜະລິດ ຈາກໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

**ມາດຕາ 16. ກຳມະວິທີເສີມຄຸນຄ່າ ແລະ ແຍກແຮ່ທາດ**

ກຳມະວິທີເສີມຄຸນຄ່າ ແລະ ແຍກແຮ່ທາດ ແມ່ນການນຳໃຊ້ຫຼັກການທາງດ້ານເຄມີ ແລະ ວັດຖຸ ຕາມຈຸດພິເສດການປະກອບສ້າງຂອງແຮ່ທາດ ທີ່ເປັນເປົ້າໝາຍ ເຊິ່ງກຳມະວິທີການເສີມຄຸນຄ່າ ແລະ ແຍກແຮ່ທາດ ປະກອບມີ:

1. ກຳມະວິທີແບບ Mineral Processing.
2. ກຳມະວິທີແບບ Hydrometallurgy.
3. ກຳມະວິທີແບບ Pyrometallurgy.
4. ກຳມະວິທີແບບ Electrometallurgy.
5. ກຳມະວິທີແບບ Biomining.

**ມາດຕາ 17. ຂັ້ນຕອນພື້ນຖານຂອງການເສີມຄຸນຄ່າ ແລະ ແຍກແຮ່ທາດ.**

ຂັ້ນຕອນພື້ນຖານຂອງການເສີມຄຸນຄ່າ ແລະ ແຍກແຮ່ທາດ ຈະແບ່ງອອກເປັນ 3 ຂັ້ນຕອນຄື:

1. ຂັ້ນຕອນການຫຼຸດ ແລະ ແຍກຂະໜາດ (Comminution)
2. ຂັ້ນຕອນການຍົກຄຸນນະພາບແຮ່ (Beneficiation)
3. ຂັ້ນຕອນການແຍກແບບຫຼອມ ແລະ ກັ່ນຕອງ ເພື່ອໃຫ້ບໍລິສຸດ (Smelting and Refining)

ຂັ້ນຕອນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຂອງ ແຕ່ລະແຮ່ທາດ ຈະມີຄວາມແຕກຕ່າງກັນຕາມຈຸດພິເສດຂອງການນຳໃຊ້ແຮ່ທາດນັ້ນ.

**ມາດຕາ 18 ຜົນຜະລິດແຮ່ທາດ ຈາກໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ**

ຜົນຜະລິດແຮ່ທາດ ຈາກໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະແຍກແຮ່ທາດ ແບ່ງອອກເປັນ 2 ປະເພດຄື:

1. ຜະລິດຕະພັນແຮ່ທາດເຄິ່ງສຳເລັດຮູບ.
2. ຜະລິດຕະພັນແຮ່ທາດສຳເລັດຮູບ.

ສຳລັບແຮ່ແກ້ວປະເສີດ ມີ 3 ປະເພດຄື: ແກ້ວດິບ, ແກ້ວເຄິ່ງສຳເລັດຮູບ ແລະ ແກ້ວສຳເລັດຮູບ.

## ໝວດທີ V
## ວ່າດ້ວຍ ຂໍ້ຫ້າມ

**ມາດຕາ 19. ຂໍ້ຫ້າມສຳລັບພະນັກງານ.**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່  ທີ່ຮັບຜິດຊອບວຽກງານ ໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ມີການກະທຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດໜ້າທີ່ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ.
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ການຈັດຕັ້ງມອບໝາຍໃຫ້.
4. ເປີດເຜີຍຄວາມລັບ ຂອງ ລັດ ແລະ ຂອງ ລັດຖະບານ ຫຼື ຄວາມລັບທາງດ້ານການຄ້າ-ວິຊາການກ່ຽວກັບໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.
5. ປອມແປງເອກະສານ ເຊັ່ນ: ປອມແປງລາຍເຊັນ, ຕາປະທັບ, ບັນຊີ ແລະ ຂໍ້ມູນກິດຈະການກ່ຽວກັບອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

6. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຄູ່ ແລະ ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງ ຕາມກົດໝາຍ.
7. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 20. ຂໍ້ຫ້າມສຳລັບຜູ້ລົງທຶນ.**

ຫ້າມຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ມີການກະທຳ ດັ່ງນີ້:

1. ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ.
2. ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ນອກແຜນການທີ່ໄດ້ຮັບຮອງເອົາ, ດຳເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ຢູ່ນອກເຂດອະນຸຍາດ ແລະ ນອກການອະນຸຍາດ.
3. ທຳລາຍ ຫຼື ສ້າງຄວາມເສຍຫາຍໃຫ້ແກ່ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.
4. ເຄື່ອນຍ້າຍ, ປ່ຽນແປງ, ດັດແກ້, ຕໍ່ເຕີມ, ຂະຫຍາຍ ແລະ ມ້າງອາຄານໂຮງງານ, ເຄື່ອງຈັກ ເຄື່ອງຈັກ-ອຸປະກອນ ແລະ ລະບົບການເສີມຄຸນຄ່າ ແລະ ແຍກແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ.
5. ນຳເຂົ້າໂຮງງານ, ພາຫານະ, ເຄື່ອງຈັກ, ອຸປະກອນ, ວັດຖຸດິບ, ແຮ່ດິບ, ແຮ່ເຄິ່ງສຳເລັດຮູບ ແລະ ສານເຄມີ ໂດຍບໍ່ໄດ້ຮັບອະນຸຍາດ.
6. ນຳເອົາໃບອະນຸຍາດຂອງຕົນໄປຄ້ຳປະກັນ ຫຼື ປະກອບຮຸ້ນ, ກູ້ຢືມ, ໃຫ້ເຊົ່າ, ໂອນ, ມອບ, ຊວດຈຳ ຫຼື ຂາຍໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ.
7. ຊື້ຈ້າງ ໃຫ້ສິນບົນແກ່ພະນັກງານ, ເຈົ້າໜ້າທີ່ກວດກາ ແລະ ປະຊາຊົນ.
8. ລາຍງານບໍ່ຖືກຄວາມເປັນຈິງ ແລະ ປອມແປງເອກະສານ ແລະ ກາປະທັບ.
9. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ.

## ໝວດທີ VI
## ວ່າດ້ວຍຄ່າທຳນຽມ ແລະ ພາສີອາກອນ

**ມາດຕາ 21. ຄ່າທຳນຽມ**

ຜູ້ໄດ້ຮັບອະນຸຍາດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ໃບອະນຸຍາດກໍ່ສ້າງ ແລະ ໃບອະນຸຍາດດຳເນີນກິດຈະການ, ການຕໍ່ອາຍຸ, ການຂະຫຍາຍ ຫຼື ການໂອນກິດຈະການໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຕ້ອງໄດ້ຈ່າຍຄ່າທຳນຽມຕາມຂັ້ນຕອນ ໂດຍສອດຄ່ອງຕາມລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ ວາງອອກຕາມແຕ່ລະໄລຍະ.

**ມາດຕາ 22. ພາສີອາກອນ.**

ຜູ້ໄດ້ຮັບສິດດຳເນີນກິດຈະການໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດທີ່ສອດຄ່ອງຕາມ ກົດໝາຍວ່າດ້ວຍ ແຮ່ທາດ ຈະໄດ້ການຍົກເວັ້ນພາສີ-ອາກອນນຳເຂົ້າ ກົນຈັກໜັກ ຮັບໃຊ້ການຜະລິດທາງກົງ ໂດຍສອດຄ່ອງ ຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ຂອງ ສປປ ລາວ, ສ່ວນພາສີອາກອນອື່ນໆ ແມ່ນປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ VII
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 23. ການຄຸ້ມຄອງໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ**

ຂະແໜງພະລັງງານ ແລະ ບໍ່ແຮ່ ຄຸ້ມຄອງບັນດາໂຮງງານ ອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ດັ່ງລຸ່ມນີ້:

1. ໂຮງງານທີ່ຢູ່ພາຍໃຕ້ສັນຍາ ກ່ຽວກັບການຂຸດຄົ້ນບໍ່ແຮ່ ແລະ ປຸງແຕ່ງແຮ່ທາດ (ເສີມຄຸນຄ່າ ແລະ ແຍກແຮ່ທາດ) ທີ່ຂະແໜງພະລັງງານ ແລະ ບໍ່ແຮ່ຄຸ້ມຄອງ.
2. ໂຮງງານທີ່ນຳເອົາດິນແຮ່ ຫຼື ຜະລິດຕະພັນແຮ່ທາດເຄິ່ງສຳເລັດຮູບ ທີ່ໄດ້ຈາກພາຍໃນ ຫຼື ຕ່າງປະເທດ ມາເສີມຄຸນຄ່າ ແລະ ແຍກແຮ່ທາດ ຈົນໃຫ້ກາຍເປັນຜະລິດຕະພັນແຮ່ທາດສຳເລັດຮູບ ໂດຍນຳໃຊ້ກຳມະວິທີ ທີ່ລະບຸໄວ້ໃນມາດຕາ 16 ຂອງລະບຽບການສະບັບນີ້

**ມາດຕາ 24. ສິດ ແລະ ໜ້າທີ່ຂອງກົມບໍ່ແຮ່.**

ໃນການຄຸ້ມຄອງການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າແລະແຍກແຮ່ທາດ ກົມບໍ່ແຮ່ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະມົນຕີໃນການຄົ້ນຄ້ວາ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ຜັນຂະຫຍາຍ ແນວທາງໃຫ້ກາຍເປັນແຜນງານ, ໂຄງການລະອຽດ ເພື່ອເຮັດໃຫ້ການດຳເນີນກິດຈະການໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດໃຫ້ໄປຕາມທິດພັດທະນາແບບຍືນຍົງ.
2. ຮ່າງບັນດານິຕິກຳ ກ່ຽວກັບການດຳເນີນກິດຈະການໂຮງງານ ອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ;
3. ສຶກສາ, ກວດຜ່ານ ແລະ ຮັບຮອງເອົາ ແຜນການອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ;
4. ຄົ້ນຄ້ວາ, ຕິດຕາມ ແລະ ລາຍງານ ກ່ຽວກັບຜົນປະໂຫຍດຈາກການດຳເນີນ ກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໂດຍປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງເພື່ອລາຍງານລັດຖະມົນຕີ;

5. ເຂົ້າຮ່ວມເຈລະຈາ ແລະ ເຊັນສັນຍາສ້າງຕັ້ງ ແລະ ດໍາເນີນກິດຈະການໂຮງງານອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ມີເຂດສໍາປະທານຂຸດຄົ້ນບໍ່ແຮ່ ເປັນຂອງຕົນເອງຕາມການມອບໝາຍຂອງລັດຖະມົນຕີ;
6. ອອກ, ຕໍ່, ໂຈະ ແລະ ຍົກເລີກ ໃບອະນຸຍາດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກຂອງໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ມີເຂດສໍາປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງ ຕາມການຕົກລົງຂອງກະຊວງພະລັງງານ ແລະ ບໍ່ແຮ່;
7. ອອກ, ຕໍ່, ໂຈະ ແລະ ຍົກເລີກ ໃບອະນຸຍາດກໍ່ສ້າງໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ດໍາເນີນການເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ເປັນໂຮງງານຂະໜາດໃຫຍ່ ແລະ ໂຮງງານຂະໜາດກາງ ຕາມການຕົກລົງຂອງກະຊວງພະລັງງານ ແລະ ບໍ່ແຮ່;
8. ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກການດໍາເນີນກິດຈະການກ່ຽວກັບການເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ລະເມີດສັນຍາຕາມລະບຽບການ;
9. ຄຸ້ມຄອງ, ຕິດຕາມການດໍາເນີນກິດຈະການເສີມຄຸນຄ່າ ແລະ ແຍກແຮ່ທາດ ແລະ ຜົນຜະລິດຂອງ ການເສີມຄຸນຄ່າ ແລະ ແຍກແຮ່ທາດ.
10. ຍັ້ງຢືນທາງດ້ານວິຊາການ ແລະ ຕິດຕາມ ກ່ຽວກັບການສົ່ງອອກ ຫຼື ນໍາເຂົ້າພາຫະນະ, ອຸປະກອນ, ກົນຈັກ, ວັດຖຸດິບ, ສານເຄມີ ແລະ ສິ້ນສ່ວນອື່ນໆ ຮັບໃຊ້ການດໍາເນີນທຸລະກິດກ່ຽວກັບອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ;
11. ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປົກປັກຮັກສາ, ສົ່ງເສີມ, ຄຸ້ມຄອງກິດຈະການ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດໍາເນີນກິດຈະການໂຮງງານ ອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ;
12. ພົວພັນ ແລະຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຕາມການມອບໝາຍຂອງ ລັດຖະບານ;
13. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ລັດຖະມົນຕີຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນລະບຽບ ແລະ ກົດໝາຍ.

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການດໍາເນີນກິດຈະການໂຮງງານປຸງແຕ່ງແຮ່ທາດ ພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ ແລະນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ,ຄໍາແນະນໍາ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ການດໍາເນີນກິດຈະການໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່, ອົງການປົກຄອງແຂວງ, ນະຄອນ;
2. ໂຄສະນາ, ເຜີຍແຜ່ລະບຽບ ກ່ຽວກັບການດໍາເນີນກິດຈະການໂຮງງານອຸດສາຫະກໍາເສີມ

ຄຸນຄ່າ ແລະ ແຍກແຮ່ທາດ;

3. ຂຶ້ນທະບຽນການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກ ແຮ່ທາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ;
4. ຄົ້ນຄ້ວາປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ແລ້ວສະເໜີໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ພິຈາລະນາ;
5. ອອກ, ຕໍ່, ໂຈະ ແລະ ຍົກເລີກ ໃບອະນຸຍາດສ້າງຕັ້ງໂຮງງານ ແລະ ດຳເນີນອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ເປັນແຮ່ທາດສະເພາະ, ທີ່ເປັນໂຮງງານຂະໜາດນ້ອຍທີ່ບໍ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ ເປັນຂອງຕົນເອງ ແລະ ທີ່ມີເຂດສຳປະທານຂຸດຄົ້ນບໍ່ແຮ່ເປັນຂອງຕົນເອງຕາມການຕົກລົງຂອງກະຊວງພະລັງງານ ແລະ ບໍ່ແຮ່.
6. ສະເໜີຕໍ່ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາໂຈະ ຫຼື ລຶບລ້າງການດຳເນີນການສ້າງຕັ້ງໂຮງງານ ແລະ ດຳເນີນອຸດສາຫະກຳເສີມຄຸນຄ່າ ແລະ ແຍກແຮ່ທາດໃນ ຂອບເຂດທີ່ຕົນໄດ້ອອກໃບອະນຸຍາດ; ຕິດຕາມ ແລະ ປະເມີນຜົນ ກ່ຽວກັບການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ລວມທັງການປະຕິບັດພັນທະຕ່າງໆ ກ່ຽວກັບການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ຢັ້ງຢືນທາງດ້ານວິຊາການ ແລະ ຕິດຕາມ ກ່ຽວກັບ ການສົ່ງອອກ ຫຼື ນຳເຂົ້າພາຫະນະ, ອຸປະກອນ, ກົນຈັກ, ວັດຖຸດິບ ແລະ ສິ້ນສ່ວນອື່ນໆ ຮັບໃຊ້ການດຳເນີນທຸລະກິດ ກ່ຽວກັບ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໃນຂອບເຂດທີ່ຕົນໄດ້ອອກອະນຸຍາດ;
8. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ;
9. ຢັ້ງຢືນການປະຕິບັດວຽກງານກ່ຽວກັບກິດຈະການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ແລ້ວລາຍງານໃຫ້ກະຊວງພະລັງງານ ແລະບໍ່ແຮ່ ແລະ ອົງການປົກຄອງແຂວງ, ນະຄອນ;
10. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ.**

ໃນການຄຸ້ມຄອງ ດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຫ້ອງການພະລັງງານ ແລະ ບໍ່ແຮ່ປະຈຳເມືອງ ແລະ ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳກ່ຽວກັບວຽກງານການດຳເນີນກິດຈະການໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ;
2. ເຜີຍແຜ່ລະບຽບການ ກ່ຽວກັບ ການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ;
3. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດກ່ຽວກັບການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ, ລວມທັງຕິດຕາມການເຄື່ອນໄຫວກ່ຽວກັບກິດຈະການ, ການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ຂະແໜງພະລັງງານ ແລະ ບໍ່ແຮ່ ອອກອະນຸຍາດ ໃນຂອບເຂດເມືອງ ແລະ ເທດສະບານຂອງຕົນ;
4. ສະຫຼຸບ, ລາຍງານການປະຕິບັດວຽກງານການດຳເນີນກິດຈະການໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ, ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 27. ສິດ ແລະ ໜ້າທີ່ ຂອງ ຜູ້ດຳເນີນກິດຈະການ ໂຮງງານ ອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ.**

1. ດຳເນີນວຽກງານສອດຄ່ອງຕາມແຜນການ, ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່, ສັນຍາ, ລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.
2. ມີຄວາມຮັບຜິດຊອບຕໍ່ພັນທະຕ່າງໆ ເຊັ່ນ: ດ້ານການເງິນ, ດ້ານສິ່ງແວດລ້ອມ-ສັງຄົມ, ດ້ານຄວາມປອດໄພແຮງງານ, ດ້ານສຸຂະພາບ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນສັນຍາ ແລະ ກົດໝາຍຂອງ ສປປ ລາວ.
3. ແຕ່ງຕັ້ງຜູ້ປະສານງານ, ແຈ້ງລາຍຊື່, ທີ່ຢູ່, ເບີໂທລະສັບ, ໂທລະສານ ແລະ Email ຂອງຜູ້ຮັບຜິດຊອບໂຮງງານ ແລະ ຜູ້ປະສານງານໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງຂະແໜງພະລັງງານ ແລະ ບໍ່ແຮ່ຊາບ;
4. ລາຍງານການດຳເນີນກິດຈະການ ໂຮງງານອຸດສາຫະກຳ ເສີມຄຸນຄ່າ ແລະ ແຍກແຮ່ທາດ ໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງຂະແໜງພະລັງງານ ແລະ ບໍ່ແຮ່ ຊາບປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, 9; ເດືອນ ແລະ ປີ.
5. ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ ຂອງ ລັດຖະບານ ໃນການປະຕິບັດວຽກງານ.

**ມາດຕາ 28. ການກວດກາ.**

ຂະແໜງການທີ່ກ່ຽວຂ້ອງ ດໍາເນີນການກວດກາ ໂຮງງານອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ຕາມສິດ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ຕາມທີ່ລັດຖະບານມອບໝາຍ, ຕາມລະບຽບ ແລະ ກົດໝາຍ ທີ່ກໍານົດໄວ້.

## ໝວດທີ VIII
## ມາດຕະການຈັດຕັ້ງປະຕິບັດ

**ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດລະບຽບສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ, ມາດຕະການທາງແພ່ງ ຫຼື ຖືກດໍາເນີນຄະດີ ຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ດັ່ງນີ້:

1. ມາດຕະການສຶກສາອົບຮົມ ໃຊ້ສໍາລັບບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດລະບຽບສະບັບນີ້ ໃນສະຖານເບົາບາງ ຫຼື ເປັນຄັ້ງທໍາອິດ ເຊັ່ນ: ລາຍງານກ່ຽວກັບການດໍາເນີນໂຮງງານອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ບໍ່ຖືກຕາມກໍານົດເວລາ, ປະຕິບັດວຽກງານຊັກຊ້າ, ບໍ່ຖືກຕ້ອງຕາມແຜນການເສີມຄຸນຄ່າ ແລະ ແຍກແຮ່ທາດ, ການດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າຕໍ່າກ່ວາໜຶ່ງລ້ານກີບ ແຕ່ມີຄວາມຈິງໃຈລາຍງານ ກໍຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.
2. ມາດຕະການທາງວິໄນ ໃຊ້ສໍາລັບພະນັກງານ ເຈົ້າໜ້າທີ່ຮັບຜິດຊອບວຽກງານກວດກາອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ໄດ້ລະເມີດລະບຽບສະບັບນີ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າແຕ່ ໜຶ່ງລ້ານກີບ ລົງມາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນກໍຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1) ຕິຕຽນ, ກ່າວເຕືອນຄວາມຜິດໂດຍບັນທຶກໄວ້ໃນສໍານວນເອກະສານ ຊີວະປະຫວັດຂອງຜູ້ກ່ຽວ;
2) ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3) ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບຜິດຊອບໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກ່ວາເກົ່າ;
4) ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຄົບຖ້ວນ.

3. ມາດຕະການປັບໃໝ ໃຊ້ສໍາລັບບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດລະບຽບສະບັບນີ້ ແລະ ຂໍ້ຫ້າມທີ່ໄດ້ກໍານົດໄວ້ ໃນລະບຽບສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າເກີນກ່ວາ ໜຶ່ງລ້ານ ກີບ ກໍຈະຖືກປັບໃໝເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ.

ໃນກໍລະນີທີ່ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ກໍ່ຈະຖືກປັບໃໝສອງເທົ່າຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການດໍາເນີນອຸດສາຫະກໍາ ເສີມຄຸນຄ່າ ແລະ ແຍກແຮ່ທາດ.

4. ມາດຕະການທາງແພ່ງໃຊ້ສໍາລັບບຸກຄົນ, ການຈັດຕັ້ງ, ວິສາຫະກິດ ຫຼື ບໍລິສັດ ທີ່ໄດ້ລະເມີດລະບຽບສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈາກການດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະແຍກແຮ່ທາດ ກໍຕ້ອງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.
5. ມາດຕະການທາງອາຍາ ໃຊ້ສໍາລັບບຸກຄົນທີ່ໄດ້ລະເມີດລະບຽບສະບັບນີ້ ທີ່ເປັນການກະທໍາຜິດທາງອາຍາເຊັ່ນ: ການປອມແປງໃບອະນຸຍາດ ດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ, ການທໍາລາຍແຫຼ່ງແຮ່, ການລັກລອບ ດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ທີ່ບໍ່ຫວງຫ້າມ ແລະ ແຮ່ທາດທີ່ຫວງຫ້າມ, ການບໍ່ປະຕິບັດ ມາດຕະການຮັບປະກັນຄວາມປອດໄພ ແລະສິ່ງແວດລ້ອມ ຊຶ່ງພາໃຫ້ມີການບາດເຈັບສາຫັດ ຫຼື ເສຍຊີວິດ, ຮັບສິນບົນ, ໃຊ້ອໍານາດເກີນຂອບເຂດ, ປອມແປງເອກະສານຕ່າງໆ ກ່ຽວກັບ ອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ, ສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວ ຈາກການດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ ກໍຈະຖືກລົງໂທດຕາມກົດໝາຍອາຍາ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.
6. ມາດຕະການໂທດເພີ່ມ ນອກຈາກທີ່ໄດ້ກໍານົດໄວ້ ໃນຂໍ້ 1,2,3,4 ແລະ 5 ຂອງມາດຕານີ້ແລ້ວຜູ້ກະທໍາຜິດ ຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເຊັ່ນ: ການໂຈະ ການດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ, ການຖອນໃບອະນຸຍາດ ດໍາເນີນອຸດສາຫະກໍາເສີມຄຸນຄ່າ ແລະ ແຍກແຮ່ທາດ, ການຮິບຊັບ, ໂຮງງານ, ພາຫະນະ ແລະ ອຸປະກອນທີ່ພົວພັນກັບ ອຸດສາຫະກໍາເສີມຄຸນຄ່າ ແລະແຍກແຮ່ທາດ ເປັນຂອງລັດ.

**ມາດຕາ 30. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມບໍ່ແຮ່ ແລະ ພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງ, ນະຄອນຫຼວງ ຫ້ອງການພະລັງງານ-ບໍ່ແຮ່ ເມືອງ ແລະ ເທດສະບານເປັນຜູ້ຊີ້ນໍາ, ຕິດຕາມ, ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງ ປະຕິບັດລະບຽບສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັບລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 31. ຜົນສັກສິດ**

ລະບຽບການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ ວ່າການກະຊວງພະລັງງານ ແລະ ບໍ່ແຮ່.

ສຸລິວົງ ດາລາວົງ